ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ມະຫາວິທະຍາໄລສຸພານຸວົງ

ເລກທີ...283.../ມຊ

ຫຼວງພະບາງ, ວັນທີ03 ກັນຍາ 2021

# ແຈ້ງການ

ຮຽນເຖິງ : ທົ່ວທຸກພະແນກສຶກສາທິການ ແລະ ກິລາ ປະຈຳແຂວງພາກເໜືອ, ຄະນະບໍດີ, ຫົວໜ້າຫ້ອງການ, ຜູ້ອຳນວຍການສູນ, ອາຈານ, ພະນັກງານ, ນັກຮຽນທີ່ຈົບມັດທະຍົມຕອນປາຍ ຕະຫຼອດຮອດພໍ່ແມ່ຜູ້ປົກຄອງນັກຮຽນ.

ເລື່ອງ : ເລື່ອນເວລາໃນການສອບເສັງຄັດເລືອກ ເອົານັກສຶກສາເຂົ້າຮຽນ ຢູ່ທີ່ມະຫາວິທະຍາໄລສຸພານຸວົງ ຫຼັກສູດລະດັບປະລິນຍາຕີ (4-5 ປີ) ປະຈຳສົກສຶກສາ 2021-2022.

ຄະນະກຳມະການຈັດຕັ້ງການສອບເສັງປະຈຳ ມະຫາວິທະຍາໄລສຸພານຸວົງ, ຂໍຖືເປັນກຽດແຈ້ງມາຍັງທ່ານກ່ຽວກັບການເລື່ອນວັນສອບເສັງເຂົ້າຮຽນລະດັບປະລິນຍາຕີ ຢູ່ທີ່ມະຫາວິທະຍາໄລສຸພານຸວົງໃນສົກ 2021-2022, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- **ເລື່ອນເວລາສອບເສັງຈາກວັນທີ 8 ກັນຍາ 2021 ໄປເປັນວັນທີ 20 ກັນຍາ 2021**
- ສຳລັບການລົງທະບຽນໃນຮູບແບບອອນລາຍ ແມ່ນສືບຕໍ່ລົງປົກກະຕິຈົນຮອດວັນທີ 17 ກັນຍາ 2021 ຫຼື ສາມາດເຂົ້າມາພົບພັນໄດ້ຢູ່ສະຖານທີ່ລົງທະບຽນ ພາຍໃນມະຫາວິທະຍາໄລສຸພານຸວົງ ຕາມໂມງລັດຖະການ.
- ສາມາດດາວໂຫຼດແບບຟອມຕ່າງໆ ຫຼື ສະໝັກໃນແບບຟອມອອນລາຍໄດ້ ໂດຍຜ່ານເວັບໄຊ໌ www.su.edu.la ຫຼື www.facebook.com/souphanouvong-univ
- ສາມາດຮັບໃບສະໝັກເຂົ້າສອບເສັງໄດ້ທີ່ຕຶກວິທະຍາສາດ (ຂ້າງສະໂມສອນໃຫຍ່) ມະຫາວິທະຍາໄລສຸພານຸວົງ, ວິທະຍາເຂດບ້ານດອນໃໝ່
- **ສາມາດຮັບໃບເຂົ້າຫ້ອງສອບເສັງນັບແຕ່ວັນທີ 13-17 ກັນຍາ 2021 ນີ້.**
- ເອກະສານປະກອບຄຳຮ້ອງຂໍສອບເສັງ:
  1. ນັກຮຽນທີ່ຮຽນຈົບ ມ.ປາຍຜ່ານມາແລ້ວ ໃຫ້ສຳເນົາ (copy) ປະກາສະນີຍະບັດຈົບຊັ້ນ ມ.ປາຍສະບັບແທ້ ຫຼື ຊົ່ວຄາວ ຫຼື ປະກາສະນີຍະບັດທຽບເທົ່າ (ໃຫ້ເອົາສະບັບຈິງມາຢັ້ງຢືນ)
  2. ນັກຮຽນທີ່ຮຽນຈົບ ມ.ປາຍໃນສົກຮຽນ 2020-2021 ຖ້າບໍ່ທັນໄດ້ຮັບປະກາສະນີຍະບັດຈົບ ມ.ປາຍ ໃຫ້ສຳເນົາ (copy) ບັດເຂົ້າຫ້ອງສອບເສັງຈົບຊັ້ນ ມ.ປາຍ (ພ້ອມທັງເອົາສະບັບຈິງມາຢັ້ງຢືນ)
  3. ຮູບຖ່າຍ 3x4cm ຈຳນວນ 3 ໃບ (ຮູບຖ່າຍຕິດປະກາສະນີຍະບັດ ຊັ້ນມັດທະຍົມປາຍ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບໂດຍທົ່ວເຖິງກັນດ້ວຍ.

**ອະທິການບໍດີ**

ຮສ. ປທ. ວິໄລ ຈັນສະຫວ່າງ

ກິໂລແມັດ 9-12, ມະຫາວິທະຍາໄລສຸພານຸວົງ, ຖະໜົນ 13 ເໜືອ, ບ້ານດອນໃໝ່, ເມືອງຫຼວງພະບາງ ແລະ ແຂວງຫຼວງພະບາງ
ໂທລະສັບ 030 5750401; ແຟກ 071 410 124